# ເສດຖະກິດເຂດອາກາດຕ່ຳຢູ່ເຂດພູດອຍຂອງຈີນ



ປະເທດຈີນ, ເຂດພູດອຍກວມເອົາເນື້ອທີ່ປະມານ 69% ແລະ ປະຊາກອນເຂດພູດອຍກວມຫຼາຍກວ່າ ເຄິ່ງໜຶ່ງຂອງປະຊາກອນທົ່ວປະເທດ. ໃນເວລາດົນນານມາແລ້ວ, ສະພາບພູມສັນຖານໄດ້ກຳຈັດການພັດທະນາເສດຖະກິດ-ສັງຄົມຂອງເຂດພູດອຍ. ປັດຈຸບັນ, ໃນຖານະເປັນໜຶ່ງໃນຕົວແທນໃຫ້ແກ່ກຳລັງການຜະລິດໃນຄຸນນະພາບໃໝ່, ເສດຖະກິດເຂດອາກາດຕ່ຳພວມໄດ້ປ່ຽນແປງຊົນນະບົດເຂດພູດອຍຂອງຈີນ ເຊິ່ງໄດ້ຂັບເຄື່ອນການພັດທະນາເສດຖະກິດເຂດພູດອຍ, ຊຸກຍູ້ໃຫ້ການບໍລິການສາທາລະນະຮັບໃຊ້ປະຊາກອນຫຼາຍກວ່າເກົ່າ ແລະ ຊ່ວຍຊຸກຍູ້ຊາວກະສິກອນລຸ້ນໃໝ່ສ້າງພາລະກິດ.

**ຜະລິດຕະພັນກະສິກຳຄຸນນະພາບດີ "ບິນ" ອອກຈາກເຂດພູດອຍ**

ຢູ່ບ້ານຮວງສີ ຕາແສງລິງມູ ເມືອງນານຄາງ ນະຄອນກ້ານໂຈ່ວ ແຂວງຈຽງຊີ, ສປ ຈີນ, ຕອນເຊົ້າ, ທ່ານ ໂລຟາງເວີນ ຜູ້ຮັບຜິດຊອບນິຄົມຊຸມຖຽນ ໄດ້ຮັບໃບສັ່ງຈອງຈາກນະຄອນເຊີນເຈິ້ນ, ທ່ານເລັ່ງເອົາໄກ່ລາດ ແລະ ໄຂ່ໄກ່ໃສ່ຫີບແລ້ວຂົນຂຶ້ນເຮືອບິນບໍ່ມີຄົນຂັບ. ພາຍຫຼັງຮັບປະກັນເລື່ອງຄວາມປອດໄພແລ້ວ, ໄດ້ບັນຊາເຮືອບິນບໍ່ມີຄົນຂັບສົ່ງໄປເຖິງຈຸດໂຮມສູນໄປສະນີ, ໃຊ້ເວລາພຽງ 12 ນາທີເທົ່ານັ້ນ, ຖ້າຂັບລົດເດີນຕາມທາງເຂດພູດອຍທີ່ຄົດລ້ຽວວົງວົ່ງກວ່າຈະໄປເຖິງຈຸດໂຮມສູນໄປສະນີ, ຕ້ອງໃຊ້ເວລາໜຶ່ງຊົ່ວໂມງປາຍ.

ບ້ານຮວງສີ ຕັ້ງຢູ່ສົ້ນເໜືອສຸດຂອງເມືອງນານຄາງ, ມີເນື້ອທີ່ປ່າໄມ້ປົກຫຸ້ມ 85%, ບ້ານສ່ວນຫຼາຍເປັນເຂດພູດອຍ, ໄຮ່ນາອ່າວໜ້ອຍ, ຖ້າເຮັດການປູກຝັງແບບດັ້ງເດີມເປັນຂະໜາດໃຫຍ່ຈະເປັນໄປໄດ້ຍາກ. ໃນຊຸມປີຜ່ານມາ, ບ້ານຮວງສີໄດ້ຄົ້ນຄວ້າການລ້ຽງໄກ່ລາດຕາມປ່າ, ໂດຍອີງໃສ່ການບໍລິການຈັດສົ່ງສິນຄ້າດ້ວຍເຮືອບິນບໍ່ມີຄົນຂັບ, ຜະລິດຕະພັນກະສິກຳທີ່ມີຄຸນນະພາບດີຂອງບ້ານໄດ້ "ບິນ" ອອກຈາກເຂດພູດອຍ.

ທ່ານ ໂລຟາງເວີນ ກ່າວວ່າ: "ຂົນສົ່ງໂດຍລົດຕູ້ແຊ່ເຢັນ ແລະ ລົດໄຟຄວາມໄວສູງ, ຖ້າພວກເຮົາສົ່ງຜະລິດຕະພັນກະສິກຳແຕ່ຕອນເຊົ້າ, ຈະສາມາດສົ່ງໄປເຖິງລູກຄ້າຢູ່ນະຄອນເຊີນເຈິ້ນໃນຕອນທ່ຽງ."

ເພື່ອແກ້ໄຂບັນຫາຄວາມຫຍຸ້ງຍາກດ້ານການຂົນສົ່ງຜະລິດຕະພັນກະສິກຳເຂດພູດອຍ, ປີ 2021, ພາຍໃຕ້ການຊີ້ນຳ-ນຳພາຂອງອົງການປົກຄອງທ້ອງຖິ່ນ, ບ້ານຮວງສີ ໄດ້ທົດລອງເປີດ "ຖ້ຽວບິນ" ໂດຍໄດ້ນຳໃຊ້ເຮືອບິນບໍ່ມີຄົນຂັບຂົນສົ່ງຜະລິດຕະພັນກະສິກຳທີ່ຢູ່ເຂດຫ່າງໄກສອກຫຼີກຕ່າງໆ ເຊັ່ນ: ໄກ່ລາດເປັນຕົ້ນ ເຊິ່ງໄດ້ແກ້ໄຂບັນຫາຄວາມຫຍຸ້ງຍາກດ້ານການຂົນສົ່ງ ໄດ້ເປັນຢ່າງດີ. ແຕ່ກ່ອນ, ຕ້ອງເສຍເວລາການຂົນສົ່ງ 40 ຫາ 50 ນາທີ, ປັດຈຸບັນ, ຖ້າໃຊ້ເຮືອບິນບໍ່ມີຄົນຂັບ, ໃຊ້ເວລາພຽງແຕ່ສິບປາຍນາທີເທົ່ານັ້ນ, ຕົ້ນທຶນການຂົນສົ່ງກໍສິບປາຍຢວນເທົ່ານັ້ນ.

ປັດຈຸບັນ, ສະພາບການຂົນສົ່ງໃໝ່ດັ່ງກ່າວໄດ້ສ້າງຜົນປະໂຫຍດໃຫ້ແກ່ຟາມລ້ຽງສັດຂອງຊາວກະສິກອນທ້ອງຖິ່ນ 26 ແຫ່ງ ແລະ ໄດ້ສ້າງລາຍຮັບເພີ່ມໃຫ້ແກ່ຊາວກະສິກອນ 106 ຄອບຄົວ. ປີ 2025, ລາຍຮັບທັງໝົດຂອງຟາມເຫຼົ່ານີ້ມີຫຼາຍກວ່າ 49 ລ້ານຢວນ, ໄດ້ເພີ່ມຂຶ້ນເກືອບ 3 ເທົ່າເມື່ອທຽບໃສ່ປີ 2024.

ສະພາບການຢູ່ບ້ານຮວງສີ ໄດ້ສະແດງໃຫ້ເຫັນເຖິງການພັດທະນາເສດຖະກິດເຂດອາກາດຕ່ຳຢູ່ເຂດພູດອຍຂອງຈີນ. ເອກະສານເລກ 1 ໃນປີ 2025 ຂອງສູນກາງພັກກອມມູນິດຈີນ ໄດ້ລະບຸຢ່າງຈະແຈ້ງວ່າ: ຈະຈັດເອົາເສດຖະກິດເຂດອາກາດຕ່ຳເຂົ້າເປັນກຳລັງການຜະລິດໃນຄຸນນະພາບໃໝ່ຂອງຂະແໜງການກະສິກຳ ເຊິ່ງເປັນຂີດໝາຍສະແດງໃຫ້ເຫັນວ່າ: ເສດຖະກິດເຂດອາກາດຕ່ຳຈະເສີມຂະຫຍາຍບົດບາດນັບມື້ນັບສຳຄັນໃນຂະບວນການຫັນເປັນທັນສະໄໝຂອງຂະແໜງການກະສິກຳຂອງຈີນ.

**ແກ້ໄຂບັນຫາ "ໜຶ່ງກິໂລແມັດສຸດທ້າຍ" ໃນການບໍລິການສາທາລະນະ**

ຢູ່ເຂດພູດອຍທີ່ກວ້າງໃຫຍ່ໄພສານຂອງຈີນ, ການບໍລິການສາທາລະນະແບບດັ້ງເດີມໄດ້ປະເຊີນໜ້າ ກັບສິ່ງທ້າທາຍຕ່າງໆ ເຊັ່ນ: ເສັ້ນທາງຄົດລ້ຽວ ແລະ ຕົ້ນທຶນສູງເປັນຕົ້ນ. ຈາກການຂົນສົ່ງທາງໄປສະນີດ້ວຍເຮືອບິນບໍ່ມີຄົນຂັບ ເຖິງການຊ່ວຍເຫຼືອທາງການແພດສຸກເສີນ ແລະ ການຮັບມືກັບໄພພິບັດທີ່ເກີດຂຶ້ນກະທັນຫັນ, ການປະຍຸກໃຊ້ແບບມີຫົວຄິດປະດິດສ້າງໃນຂົງເຂດເສດຖະກິດເຂດອາກາດຕ່ຳພວມໄດ້ຮັບການແກ້ໄຂບັນຫາ "ໜຶ່ງກິໂລແມັດສຸດທ້າຍ" ໃນການບໍລິການສາທາລະນະຢູ່ເຂດພູດອຍ.

ເຂດພູດອຍຂອງເມືອງແຢນຊິງ ນະຄອນຫຼວງປັກກິ່ງ ພວມມີຫິມະຕົກໜັກ, ເຮືອບິນບໍ່ມີຄົນຂັບລຳໜຶ່ງໄດ້ ຂົນສົ່ງສິນຄ້າອອກຈາກສະຖານີໄປສະນີຕາແສງຈ່າງຊານຢີງ, ຫຼັງຈາກນັ້ນ 14 ນາທີ, ໄດ້ລົງຈອດຢູ່ສູນບໍລິການນັກທ່ອງທ່ຽວບ້ານພັກງານກິລາໂອແລັມປິກລະດູໜາວທີ່ສູງຈາກລະດັບໜ້ານ້ຳທະເລ 940 ແມັດ. ເສັ້ນທາງການບິນທີ່ຍາວ 7 ກິໂລແມັດສາຍນີ້ໄດ້ແກ້ໄຂບັນຫາຄວາມຫຍຸ້ງຍາກດ້ານການຂົນສົ່ງຕາມເສັ້ນທາງພູດອຍທີ່ຍາວ 15 ກິໂລແມັດ ແລະ ໄດ້ປະຢັດເວລາການຂົນສົ່ງ 60%. ທ່ານ ກ່າວເຈ່ຍຊູ ຜູ້ຮັບຜິດຊອບໜ່ວຍງານເຮືອບິນບໍ່ມີຄົນຂັບຂອງບໍລິສັດໄປສະນີຈີນສາຂາແຢນຊິງ ກ່າວວ່າ: ປັດຈຸບັນ, ທາງບໍລິສັດມີເຮືອບິນບໍ່ມີຄົນຂັບ 3 ລຳ ເຊິ່ງສາມາດຕອບສະໜອງກັບຄວາມຕ້ອງການໃນການຂົນສົ່ງສິນຄ້າຂະໜາດກາງແລະນ້ອຍ.

ເສດຖະກິດເຂດອາກາດຕ່ຳບໍ່ພຽງແຕ່ໄດ້ເສີມຂະຫຍາຍບົດບາດໃນດ້ານການຂົນສົ່ງປະຈຳວັນເທົ່ານັ້ນ, ຫາກຍັງສາມາດເສີມຂະຫຍາຍບົດບາດໃນການກອບກູ້ຊີວິດ. ສະພາບພູມສັນຖານຂອງເມືອງມູລີ ນະຄອນລຽງຊານ ແຂວງເສສວນ ສັບສົນຫຼາຍ, ມີເຫວເລິກຜາຊັນ, ແຕ່ກ່ອນຂົນສົ່ງຄົນເຈັບສາຫັດຕ້ອງການເດີນທາງເປັນເວລາ 6 ຊົ່ວໂມງປາຍ. ພາຍຫຼັງໄດ້ເປີດເສັ້ນທາງການບິນ 120 ໄປຫານະຄອນພານຈືຮວາ ໃນເດືອນທັນວາ ປີ 2023 ເຮັດໃຫ້ການຂົນສົ່ງຄົນເຈັບໃຊ້ເວລາພຽງແຕ່ 45 ນາທີເທົ່ານັ້ນ. ຫົວຂອງທ້າວ ສຽວທັງ ອາຍຸ 3 ປີ ໃນບ້ານເຈຍກູເມືອງມູລີຖືກບາດເຈັບສາຫັດ, ໄດ້ຖືກກອບກູ້ຊີວິດຍ້ອນມີເສັ້ນທາງການບິນທາງອາກາດ. ປັດຈຸບັນ, ເສັ້ນທາງການບິນດັ່ງກ່າວໄດ້ຊ່ວຍຊີວິດຂອງຄົນເຈັບສາຫັດ 14 ຄົນແລ້ວ.

ນອກຈາກຮັບປະກັນຊີວິດຂອງປະຊາຊົນແລ້ວ, ເສດຖະກິດເຂດອາກາດຕ່ຳກໍໄດ້ກາຍເປັນ "ສະໝອງ ໄຫວພິບ" ໃນການບໍລິຫານເຂດພູດອຍ. ທຸກມື້, ເຮືອບິນບໍ່ມີຄົນຂັບຂອງບ້ານຣິງສີເມືອງຢົ້ວຊີແຂວງອ່ານຮຸຍຈະລາດຕະເວນປ່າໄມ້ 15 ກິໂລຕາແມັດ, ສາມາດກວດອັກຄີໄພທີ່ແຝງຊ້ອນຢູ່ຕາມປ່າດ້ວຍກ້ອງຖ່າຍ Infrared ray ຢ່າງຖືກຕ້ອງແມ່ນຢຳ ເຊິ່ງໄດ້ກວດພົບອັກຄີໄພທີ່ແຝງຊ້ອນຢູ່ທັງໝົດ 30 ກວ່າບ່ອນ ນັບແຕ່ປີ 2024 ເປັນຕົ້ນມາ, ປະສິດທິພາບການເຕືອນໄພໄດ້ຖືກຍົກສູງຂຶ້ນເປັນ 5 ເທົ່າ.

**ຊາວກະສິກອນລຸ້ນໃໝ່ສ້າງພາລະກິດໃນຮູບການໃໝ່**

ໃນກະແສຟອງເສດຖະກິດເຂດອາກາດຕ່ຳ, ເຕັກໂນໂລຊີເຮືອບິນບໍ່ມີຄົນຂັບພວມໄດ້ຂັບເຄື່ອນການ ສ້າງພາລະກິດຂອງຊາວກະສິກອນລຸ້ນໃໝ່.

ຢູ່ຕາແສງລິງເນີນ ເມືອງຟູຢາງ ນະຄອນຫາງໂຈ່ວ ແຂວງເຈີ້ຈຽງມີເຂດພູດອຍຫຼາຍ, ທ້າວຢາງເຈ່ຍເຈ ເກີດໃນຊຸມປີ 1990 ແມ່ນ "ນາຍຊ່າງບັນຊາເຮືອບິນບໍ່ມີຄົນຂັບ" ທີ່ມີຊື່ສຽງ.

ປີ 2017, ພໍ່ຂອງທ້າວຢາງເຈ່ຍເຈ ໄດ້ຊື້ເຮືອບິນບໍ່ມີຄົນຂັບລຳທຳອິດ ຍ້ອນນິຄົມຂອງຕົນຂາດແຮງງານ ແລະ ຕົ້ນທຶນສູງຂຶ້ນ ແລ້ວມອບໜ້າທີ່ບັນຊາເຮືອບິນບໍ່ມີຄົນຂັບໃຫ້ແກ່ທ້າວຢາງເຈ່ຍເຈ. ລາວໄດ້ກຳເຕັກນິກທີ່ກ່ຽວຂ້ອງຢ່າງວ່ອງໄວ ເຊິ່ງໄດ້ເຮັດໃຫ້ປະສິດທິພາບໃນການສີດຢາປາບສັດຕູພືດສູງຂຶ້ນ 40 ເທົ່າ ແລະ ປະລິມານການໃຊ້ຢາໜ້ອຍລົງ 15%. ປັດຈຸບັນ, ລາວມີເຮືອບິນບໍ່ມີຄົນຂັບ 13 ລຳ, ເຮືອບິນບໍ່ມີຄົນຂັບລຸ້ນ T100 ສາມາດບັນທຸກນ້ຳໜັກໄດ້ເຖິງ 340 ກິໂລ, ສາມາດປະຕິບັດໜ້າທີ່ວ່ານປຸຍເຄມີ, ສີດຢາ, ຂົນສົ່ງວັດຖຸ ແລະ ອື່ນໆ.

ທ້າວ ຢາງເຈ່ຍເຈ ຍັງໄດ້ນຳພາປະຊາຊົນໃນບ້ານສ້າງຄວາມຮັ່ງມີຮ່ວມກັນ ໂດຍການຝຶກອົບຮົມເຕັກນິກທີ່ກ່ຽວຂ້ອງ. ນັບມາຮອດປັດຈຸບັນ, ຜູ້ບັນຊາເຮືອບິນບໍ່ມີຄົນຂັບທີ່ໄດ້ຮັບການຝຶກສອນຈາກທ້າວຢາງເຈ່ຍ ເຈ ມີຫຼາຍກວ່າ 1,600 ຄົນ. ປີ 2024, ລາວໄດ້ສ້າງຕັ້ງບໍລິສັດວິທະຍາສາດເຕັກໂນໂລຊີຟູຢາງຢູຫາງໂຈ່ວ ຈຳກັດ ເພື່ອໃຫ້ບໍລິການດ້ານການອະນຸລັກພືດ, ການລາດຕະເວນນາດ້ວຍເຮືອບິນບໍ່ມີຄົນຂັບ ໃຫ້ແກ່ຊາວ ກະສິກອນ, ຍັງໄດ້ໃຫ້ການບໍລິການໃນດ້ານການຝຶກສອນສີມືໃຫ້ແກ່ໜ່ວຍງານຮັບມືສຸກເສີນ, ການເຊົ່າ ແລະ ສ້ອມແປງເຮືອບິນບໍ່ມີຄົນຂັບ ແລະ ອື່ນໆ. ປັດຈຸບັນ, ເງິນເດືອນສະເລ່ຍຕໍ່ຫົວຄົນຂອງຜູ້ບັນຊາເຮືອບິນໃນບໍລິສັດຂອງລາວມີຫຼາຍກວ່າ 12,000 ຢວນ, ຜູ້ບັນຊາດີເດັ່ນຈະມີເຖິງ 14,000 ຢວນ.

ປັດຈຸບັນ, ນິຄົມຂອງຄອບຄົວຢາງເຈ່ຍເຈໄດ້ພັດທະນາໄປຕາມທິດທາງທີ່ຫັນໄປສູ່ຕະຫຼາດ, ເປັນແບບວິຊາການ ແລະ ມີຂະໜາດນັບມື້ນັບໃຫຍ່ຂຶ້ນກວ່າເກົ່າ. ລາວເຊື່ອວ່າ: ຄຽງຄູ່ກັບການພັດທະນາຂອງເສດຖະກິດເຂດອາກາດຕ່ຳ, ຊົນນະບົດຈະນັບມື້ນັບສວຍງາມກວ່າເກົ່າ ແລະ ຊີວິດການເປັນຢູ່ຂອງຊາວກະສິກອນຈະນັບມື້ນັບດີຂຶ້ນກວ່າເກົ່າ.

(ສະໜອງຂໍ້ມູນໂດຍ: ສູນການສື່ສານສາກົນພາກພື້ນອາຊີໃຕ້-ອາຊີຕາເວັນອອກສ່ຽງໃຕ້ ແຂວງຢຸນນານ)





**ເນື້ອໃນເພີ່ມເຕີມ:**

ເສດຖະກິດເຂດອາກາດຕ່ຳແມ່ນເສດຖະກິດລັກສະນະກວມລວມທີ່ເນັ້ນໃສ່ການພັດທະນາເຮືອບິນບໍ່ມີ ຄົນຂັບ, ການບິນທົ່ວໄປ ແລະ ການທ່ອງທ່ຽວຢູ່ຕາມເຂດອາກາດຕ່ຳ ພ້ອມທັງນຳພາການພັດທະນາຂົງ ເຂດທີ່ກ່ຽວຂ້ອງແບບເຊື່ອມໂຍງເຂົ້າກັນທີ່ອີງໃສ່ເຂດອາກາດທີ່ຕ່ຳກວ່າ 3.000 ແມັດ.

ynzhanba@163.com
laos.yunnangateway.com